**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 18 ຕຸລາ 2009 (10-18-2009)**

---

**ວິຣະຊົນຜູ້ທໍຣະຍົດ:**

**ຂໍ້ພຣະຄັມພີໃນບົດຮຽນ**: (ມາຣະໂກ 14:27-34,37-38,43,48-50)

**ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:**

ບົດຮຽນນີ້ຊີ້ໃຫ້ເຫັນທີ່ພວກສາວົກໄດ້ທໍຣະຍົດ ແລະປະຖິ້ມພຣະເຢຊູຢ່າງໃດ ເຖິງແມ່ນວ່າພວກເຂົາເຈົ້າໄດ້ເວົ້າຢ່າງຄັກແນ່ວ່າຈະຕັ້ງໝັ້ນຄົງ ຈົງຮັກພັກດີຕໍ່ພຣະອົງກໍຕາມ.

**ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສຳຄັນ?:**

ພວກສາວົກໝັ້ນໃຈວ່າຕົນເອງເຂັ້ມແຂງ ສາມາດຕ້ານທານຕໍ່ການທົດລອງທີ່ຈະນຳມາເຖິງການທໍຣະຍົດຕໍ່ພຣະຄຣິດ. ຢ່າງໃດກໍຕາມຂນາດວ່າປັບປຸງດັດແປງຝ່າຍຈິດວິນຍານ ແລະຄວາມເສີຍເມີຍກໍນຳໄປເຖິງການເປັນຄຣິສຕຽນທີ່ບໍ່ເກີດຜົນ ທີ່ເອີ້ນວ່າ ການທໍຣະຍົດຕໍ່ພຣະຄຣິດ.

**ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:**

ບົດຮຽນນີ້ ຈະຊ່ອຍໃຫ້ທ່ານລະວັງຄວາມອ່ອນແອທາງດ້ານຈິດວິນຍານ ແລະໃຫ້ຝຶກຊ້ອມກິດລະບຽບທາງຝ່າຍຈິດວິນຍານ.

**ການຈັດຕຽມ ແລະແຜນການສອນຂອງຄຣູ:**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**ແນະນຳ:**

- ບົດຮຽນນີ້ສະແດງເຖິງບັ້ນສຸດທ້າຍຊຶ່ງພຣະເຢຊູຜູ້ເປັນວິຣະຊົນອາດຫານໄດ້ຮຽກເອີ້ນຜູ້ທີ່ຕິດຕາມພຣະອົງໃຫ້ເດີນທາງໄປກັບພຣະອົງ. ບົດຮຽນບົດນີ້ຈະທ້າທາຍບັນດາຜູ້ທີ່ເຊື່ອທັງຫລາຍໃຫ້ເປັນຄົນທີ່ປ້ອງກັນບໍ່ໃຫ້ມີການອ່ອນແອທາງດ້ານຈິດວິນຍານ.
- ຄຳຖາມ: ເປັນຫຍັງບາງເທື່ອຄຣິສຕຽນຈຶ່ງເຊື່ອວ່າຄວາມເຊື່ອຂອງເຂົາເຈົ້າໄດ້ປ້ອງກັນການຫລອກລວງຂອງການທໍຣະຍົດຕໍ່ພຣະຄຣິດໄດ້?
- ທ່ານຈະວ່າແນວໃດຕໍ່ຄຣິສຕຽນຜູ້ທີ່ເສີຍເມີຍນັ້ນ?

- ຣິດອຳນາດຂອງພຣະເຈົ້າໄດ້ຊົງຊ່ວຍຄຣິສຕຽນໃຫ້ຫລີກເວັ້ນຈາກການເຊື່ອໝັ້ນຕົນເອງຈົນເກີນໄປໄດ້ບໍ່?
- ໃນຂນະທີ່ພຣະອົງຊົງມີຊີວິດຢູ່ໃນໂລກນີ້ ພຣະອົງໄດ້ຊົງສຳແດງໃຫ້ບັນດາຜູ້ທີ່ຕິດຕາມພຣະອົງຫຍັງແດ່, ທີ່ຊີ້ໃຫ້ເຫັນວ່າພຣະອົງເປັນວີຣະຊົນຜູ້ອາດຫານເອົາຊະນະໃນການຕໍ່ສູ້ກັບສັດຕຣູ?

1. **<u>ບໍ່ຮູ້ສຶກຕໍ່ອັນຕະລາຍ:</u>** (ມາຣະໂກ 14:27-31)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ມາຣະໂກ 14:27-31
- ຈັດຕຽມພຣະທັມຂໍ້ນີ້ໄວ້ເວົ້າຕອນສລຸບ (ມາຣະໂກ 14:26) ອົງພຣະຜູ້ເປັນເຈົ້າອົງສູງສຸດ, ພຣະເຢຊູແລະພວກສາວົກກໍໄປທີ່ສວນເຄັດເຊມາເນເທິງພູເຂົາໝາກກອກເທດ, ຊຶ່ງເປັນລະຍະທາງຫ່າງໄກເຖິງໄມເຄິ່ງ. ຊຶ່ງພຣະເຢຊູໄດ້ຊົງທຳນວາຍໄວ້ວ່າອັຄສາວົກຂອງພຣະອົງຈະທໍຣະຍົດຕໍ່ພຣະອົງ.
- ໃນພຣະທັມມາຣະໂກ 14:28, ຄຳສັນຍາແນວທີ່ໃຫ້ຄວາມຫວັງໃນຂນະທີ່ມີຄວາມວ້າເວ່ໃຈໃນການຕໍ່ສູ້ນີ້?
- ທ່ານເປໂຕໄດ້ໂຊຄວາມເຊື່ອໝັ້ນໃນການປຽບທຽບໃຫ້ສາວົກຄົນອື່ນໆແນວໃດ?
- ຈົ່ງສົນທະນາເຖິງເຣື່ອງ ຜູ້ທີ່ຕິດຕາມພຣະເຢຊູທີ່ມີປະສົບການໃນເວລາທີ່ມືດມົນ ແລະ ການປະນາມ. ສເນີບາງເຫດຜົນສຳລັບຄວາມເຊື່ອໝັ້ນທາງດ້ານຈິດວິນຍານລະຫວ່າງສະມາຊິກໃນໂບດ.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (ມາຣະໂກ 14:27-31)

1. ໃນອາທິດທີ່ຜ່ານມາທ່ານໄດ້ຖືກກ່າວຫາວ່າເປັນຄົນທໍຣະຍົດຕໍ່ພຣະເຢຊູບໍ່?
2. ເປັນດ້ວຍເຫດໃດບາງເທື່ອບັນດາຜູ້ທີ່ເຊື່ອຈຶ່ງງ່າຍຕໍ່ ການອວດຕົວ, ຄວາມເຫັນແກ່ຕົວ,ແລະເຮັດໃນສິ່ງທີ່ແຕກຕ່າງໄປຈາກພຣະເຢຊູ?
3. ບາງສິ່ງບາງຢ່າງທາງຝ່າຍໂລກທີ່ມັນເປັນອັນຕະລາຍທີ່ຄຣິສຕຽນທັງຫລາຍປະເຊີນຢູ່ທຸກວັນນັ້ນແມ່ນຫຍັງແດ່?
4. ເປັນຫຍັງບາງເທື່ອການຫລອກລວງຝ່າຍຈິດວິນຍານຈຶ່ງເປັນປໂຍດແກ່ຄວາມເຊື່ອຂອງພວກເຮົາ?

**2. <u>ນອນຢູ່ໃນຖ້າມກາງຄວາມອັນຕະລາຍ:</u>** (ມາຣະໂກ 14:32-34, 37-38)

- ສເນີໃຫ້ນັກຮຽນຜູ້ນຶ່ງອ່ານພຣະທັມ ມາຣະໂກ 14:32-34, 37-38
- ພຣະເຢຊູ ແລະພວກອັຄສາວົກ 11 ຄົນທີ່ເຫລືອໄດ້ພາກັນຂຶ້ນໄປຍັງພູໝາກກອກເທດ.
- ແມ່ນຫຍັງທີ່ເປັນການສນັບສນູນ ຫລືຂໍ້ແກ້ຕົວໃນການຫລັບທີ່ເປໂຕ, ຢາໂກໂບ ແລະໂຢຮັນໄດ້ສເນີມາຫລືບອກໄວ້?
- ຄົນໃນສມັຍນີ້ມີຂໍ້ແກ້ຕົວແນວໃດແດ່ທີ່ເຂົາເຈົ້າປະຕິເສດທີ່ບໍ່ຢາກທຳຕາມທີ່ພຣະເຢຊູຊົງຕ້ອງການໃຫ້ໃຫ້ເຂົາເຮັດ?
- ໃນຂໍ້ທີ 38 ໄດ້ບອກເຖິງເຣື່ອງການຫລອກລວງທີ່ພຣະເຢຊູໄດ້ຊົງເຕືອນເອົາໄວ້.
- ໃຫ້ນັກຮຽນຍົກເອົາຄຳວ່າ ຫລອກລວງຂຶ້ນມາ, ແລ້ວໃຫ້ນັກຮຽນສເນີຫົນທາງແຫ່ງຊັຍຊະນະທີ່ຄຣິສຕຽນສາມາດປ້ອງກັນໄດ້.
- ແມ່ນຫຍັງທີ່ຂັດຂວາງການຮຽນພຣະຄັມພີ, ການອະທິຖານຂອງຄຣິສຕຽນ?
- ພຣະເຢຊູຈະເຮັດແນວໃດກັບພວກເຮົາໃນເມື່ອພຣະອົງບອກໃຫ້ພວກເຮົາເຮັດແຕ່ພວກເຮົາບໍ່ເຮັດ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** ມາຣະໂກ 14:32-34,37-38

1. ຊັຍຊະນະອັນໃດທີ່ເຮັດໃຫ້ຄຣິສຕຽນຈື່ຈຳຊຶ່ງເປັນສາຍສັມພັນອັນໝັ້ນຄົງກັບພຣະເຢຊູທີ່ມີເງື່ອນໄຂໃນການຕິດຕາມ ແລະຮ່ວມອະທິຖານຢ່າງສມ່ຳສເມີຂອງສາວົກ?
2. ໃນເມື່ອຜູ້ທີ່ເຊື່ອໄດ້ມີປະສົບການກັບຄວາມໂສກເສົ້າ ແລະອັນຕະລາຍຕ່າງໆ, ມະນຸດຈະສນັບສນູນເຮັດໃຫ້ການກິດຊື່ ບຽດບຽນສະດວກງ່າຍຂື້ນໄດ້ຢ່າງໃດ?
3. ໃນເມື່ອທ່ານມີຄວາມອິດເມື່ອຍ ແລະລຳຄານຕໍ່ການຮັບໃຊ້ຄຣິສຕຽນຂອງທ່ານແລ້ວແມ່ນຫຍັງທີ່ທ່ານຈະເລືອກ? ຈະເລືອກທີ່ຈະເຊົາຮັບໃຊ້ເລີຍ ຫລື ຈະສູ້ທົນຕໍ່ໄປ?
4. ທ່ານເຄີຍເວົ້າບໍ່ວ່າ " ວິນຍານເປັນສິ່ງທີ່ແນ່ນອນໝັ້ນຄົງ, ແຕ່ເນື້ອໜັງນັ້ນກໍອ່ອນເພັຽ? ທ່ານໝາຍຄວາມວ່າແນວໃດ?

3 . **ພິຈາກອັນຕະລາຍ:** (ມາຣະໂກ 14:43,48-50)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ມາຣະໂກ 14:43,48-50
- ການຈັບກຸມໃນເວລາກາງຄືນນັ້ນທ່ານຄິດວ່າແນວໃດ ເພາະເຫດຜົນອັນໃດ?
- ໃຫ້ນັກຮຽນສເນີທາງທີ່ຄຣິສຕຽນສາມາດຈັດຕຽມເພື່ອປະເຊີນໜ້າກັບການທ້າທາຍຂອງການຕິດຕາມພຣະເຢຊູ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** ມາຣະໂກ 14:43,48-50

1. ໃນເມື່ອຄຣິສຕຽນມີຊັຍຊະນະຄວາມຢ້ານກົວ, ກຳລັງໃຈແນວໃດທີ່ຈຳເປັນແນວໃດທີ່ຈະຕ້ອງຢືນຂຶ້ນເພື່ອພຣະຄຣິດ?
2. ທ່ານເຫັນດີ ຫລືບໍ່ເຫັນດີກັບການປະກາດນີ້: ທ່ານບໍ່ສາມາດຕໍ່ສູ້ສັດຕຣູຝ່າຍຈິດວິນຍານດ້ວຍອາວຸດຝ່າຍຮ່າງກາຍ?
3. ຖ້າຫາກປະເຊີນໜ້າກັບຄວາມຢ້ານກົວ, ທ່ານຈະໃຊ້ພຣະທັມຕອນໃດເພື່ອໜູນໃຈ?
4. ຄຣິສຕຽນຜູ້ມີຊັຍຊະນະຈະຫລີກເວັ້ນການຄວບຄຸມໂດຍຊາຕານທີ່ໃຫ້ທັກຫລັງພຣະເຢຊູໄດ້ແນວໃດ?

## **ພຣະຄັມພີແຫ່ງຄວາມຈິງ**

- ພວກເຮົາຕ້ອງປ້ອງກັນຕໍ່ສູ້ທຸກໆສິ່ງໂດຍອາສັຍພຣະວິນຍານຊຶ່ງບໍ່ແມ່ນການເຊື່ອໝັ້ນໃນຕົນເອງ.
- ສິ່ງສຳຄັນທີ່ພວກເຮົາຄວນຈົດຈຳຄື ການອະທິຖານ, ເປັນສາວົກທີ່ມີຄວາມມຸ້ງໝັ້ນ ຖ່ອມຕົວ ດຳເນີນຊີວິດຄຣິສຕຽນແຫ່ງຊັຍຊະນະຢ່າງໝັ້ນຄົງ.
- ພວກເຮົາຄວນສຶກສາພຣະຄັມພີ ແລະອະທິຖານທຸກມື້ທຸກຄືນ ຊ່ອຍກັນຮັບໃຊ້ຈະຊ່ອຍພວກເຮົາໃຫ້ເປັນຄຣິສຕຽນທີ່ມີຊັຍຊະນະ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH**